## ຜນວກ ຈ

## ວຽກງານການສຳຫລວດ ແລະ ປັກຫລັກໝາຍຊາຍແດນລາວ-ຈີນ

## (การสำรวจ และปักหลักหมายชายแดนลาว-จีน)

1. **ພາກທົ່ວໄປ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະສາທາລະນະລັດປະຊາຊົນຈີນມີເສັ້ນຊາຍແດນຮ່ວມກັນຍາວປະມານ 500 ກິໂລເມັດ, ເບື້ອງລາວມີ 3 ແຂວງຄື: ແຂວງຜົ້ງສາລີ, ແຂວງອຸດົມໄຊ ແລະ ແຂວງຫລວງນ້ຳທາ, ເບື້ອງຈີນມີ 1 ແຂວງຄື: ແຂວງຢຸນນານ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະສາທາລະນະລັດປະຊາຊົນຈີນມີຄວາມປາດຖະໜາຢ່າງແຮງກ້າໃນການປັບປຸງ ແລະຂະຫຍາຍການພົວພັນມິດຕະພາບຖານບ້ານໃກ້ເຮືອນຄຽງ ບົນພື້ນຖານເຄົາລົບເອກະລາດ, ອະທິປະໄຕ ແລະຜືນແຜ່ນດິນອັນຄົບຖ້ວນຂອງກັນ ແລະກັນ, ບໍ່ຮຸກຮານກັນ, ບໍ່ແຊກແຊງເຂົ້າໃນກິດຈະການພາຍໃນຂອງກັນ ແລະກັນ, ສະເໝີພາບ, ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ ແລະຢູ່ຮ່ວມກັນໂດຍສັນຕິ, ເພື່ອສ້າງເສັ້ນຊາຍແດນລະຫວ່າງສອງປະເທດໃຫ້ເປັນເສັ້ນຊາຍແດນຖາວອນ, ສັນຕິພາບ ແລະການຮ່ວມມືຢ່າງຍາວນານ. ທັ້ງສອງຝ່າຍຕົກລົງນຳກັນ ວ່າຈະສ້າງຊາຍແດນຂອງສອງປະເທດໃຫ້ເປັນຊາຍແດນແບບຢ່າງ ແກ່ບັນດາປະເທດໃນພາກພື້ນນີ້

ເສັ້ນຊາຍແດນລະຫວ່າງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະສາທາລະນະລັດປະຊາຊົນຈີນ ໄດ້ຖືກກຳໜົດໄວ້ ແຕ່ສະໄໝລາວຕົກເປັນຫົວເມືອງຂຶ້ນຝະລັ່ງ ຕາມສົນທິສັນຍາເພີ່ມເຕີມ "ສົນທິສັນຍາວ່າດ້ວຍການກຳໜົດຊາຍແດນລະຫວ່າງຕົງແກງ ແລະຈີນສະບັບລົງວັນທີ 26 ມິຖຸນາ 1887" ທີ່ໄດ້ເຊັນກັນເມື່ອວັນທີ 20 ມິຖຸນາ 1895. ທັງສອງຝ່າຍໄດ້ເຄົາລົບນັບຖືເສັ້ນຊາຍແດນລະຫວ່າງສອງປະເທດ ທີ່ໄດ້ກຳໜົດໄວ້ໃນສົນທິສັນຍາດັ່ງກ່າວ ພຽງແຕ່ບາງສ່ວນຂອງສົນທິສັນຍາເພີ່ມເຕີມສະບັບລົງວັນທີ 20 ມິຖຸນາ 1895 ນັ້ນບໍ່ສອດຄ່ອງກັບຄວາມເປັນຈິງ. ທັ້ງສອງຝ່າຍ ເຫັນດີໃນເວລາຈຳເປັນສາມາດດຳເນີນການສຳຫລວດກວດກາເສັ້ນຊາຍແດນ ແລະຫລັກໝາຍຊາຍແດນຄືນໃຫມ່ໄດ້. ຖ້າມີບັນຫາຫຍັງສອງຝ່າຍຕ້ອງດຳເນີນການຄຸ້ມຄອງຕາມສະພາບຕົວຈິງໃນປັດຈຸບັນ, ຫ້າມຝ່າຍໃດຝ່າຍໜຶ່ງປ່ຽນແປງສະພາບເສັ້ນຊາຍແດນຕາມລຳພັງໃຈ

ໂດຍເພີ່ມທະວີການເສີມສ້າງພົວພັນມິດຕະພາບ ແລະການຮ່ວມມືທີ່ດີງາມລະຫວ່າງສອງຝ່າຍໃຫ້ໝັ້ນຄົງ, ວັນທີ່ 8 ຕຸລາ 1989 ລັດຖະບານທັ້ງສອງຝ່າຍໄດ້ເຊັນສັນຍາຊົ່ວຄາວ ວ່າດ້ວຍການແກ້ໄຂກິດຈະການຊາຍແດນລະຫວ່າງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະສາທາລະນະລັດປະຊາຊົນຈີນ (ສັນຍາດັ່ງກ່າວຖືກລົບລ້າງແລ້ວ) ແລະໃນວັນທີ່ 24 ຕຸລາ 1991 ທັ້ງສອງຝ່າຍຈຶ່ງໄດ້ເຊັນສົນທິສັນຍາຊາຍແດນ ເພື່ອກຳໜົດເສັ້ນຊາຍແດນລະຫວ່າງກັນຂຶ້ນແລະໄດ້ຕົກລົງເຫັນດີ ໃຫ້ຄະນະວິຊາການຮ່ວມທັງສອງປຶກສາຫາລືກັນ ກ່ຽວກັບການກຳໜົດເສັ້ນຊາຍແດນຖາວອນຂຶ້ນ. ສະນັ້ນ ການສຳຫລວດ ແລະປັກຫລັກໝາຍຊາຍແດນລະຫວ່າງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະສາທາລະນະລັດປະຊາຊົນຈີນ ຈຶ່ງໄດ້ດຳເນີນໄປຕາມສົນທິສັນຍາຊາຍແດນສະບັບ

ລົງວັນທີ 24 ຕຸລາ 1991 ເພື່ອຮັບຮອງເອົາຜົນສຳເລັດຂອງການສຳຫລວດ ແລະປັກຫລັກໝາຍຊາຍແດນດັ່ງກ່າວ, ທັງສອງຝ່າຍໄດ້ຮ່ວມກັນລົງນາມອະນຸສັນຍາວ່າດ້ວຍເສັ້ນຊາຍແດນລາວ-ຈີນ ສະບັບລົງວັນທີ 31 ມັງກອນ 1991 ຊຶ່ງໄດ້ແບ່ງເຂດແດນທາງນ່ານຟ້າ, ໃຕ້ດິນ ແລະຕາມທິດເນັ່ງຂອງເສັ້ນຊາຍແດນຕັ້ງສາກ

ສອງປະເທດໄດ້ມີສາຍພົວພັນທີ່ດີຮ່ວມກັນມາແຕ່ດົນນານ ໂດຍໄດ້ສ້າງສາຍພົວພັນການທູດຮ່ວມກັນໃນວັນທີ 25 ເມສາ 1961 ສປ ຈີນ ແມ່ນເພື່ອນຍຸດທະສາດ ແລະຊ່ວຍເຫລືອລາວຕະຫລອດມາຢູ່ໃນສະໄຫມຕໍ່ສູ້ກູ້ຊາດຕ້ານຈັກກະພັດຜູ້ຮຸກຮານກໍ່ຄື ການປົກປັກຮັກສາ ແລະສ້າງສາປະເທດຊາດໃນສະໄຫມປະຈຸບັນ. ສະພາບການຕາມບໍລິເວນຊາຍແດນ ໂດຍທົ່ວໄປແລ້ວແມ່ນມີຄວາມສະຫງົບ ແລະເປັນລະບຽບຮຽບຮ້ອຍດີ, ການຈັດຕັ້ງປະຕິບັດສັນຍາລະບຽບການຊາຍແດນ ກໍ່ເຮັດໄດ້ດີພໍສົມຄວນ. ປະຊາຊົນສອງຟາກຊາຍແດນກໍ່ມີການໄປມາຫາສູ່ກັນ ແລະຄ້າຂາຍຮ່ວມກັນ ຢ່າງເປັນປົກກະຕິ ແຕ່ເຖິງຢ່າງໃດກໍ່ຕາມ ປະຊາຊົນຈຳນວນຫນຶ່ງທີ່ຢູ່ຕາມບໍລິເວນຊາຍແດນຍັງລະເມີດຕໍ່ການປະຕິບັດສັນຍາລະບຍບການຊາຍແດນ

ສປປ ລາວ ມີຊາຍແດນຮ່ວມກັບ ສປ ຈີນ ທັງໝົດ 9 ດ່ານຄື:

- ດ່ານສາກົນ ມີ 1 ດ່ານ
- ດ່ານທ້ອງຖິ່ນ ມີ 5 ດ່ານ
- ດ່ານປະເພນີ ມີ 3 ດ່ານ

2. ວຽກງານການສຳຫລວດ ແລະປັກຫລັກຫມາຍຊາຍແດນ, ການຄຸ້ມຄອງຊາຍແດນ ລາວ-ຈີນ ໃນໄລຍະຜ່ານມາຈົນເຖິງປັດຈຸບັນ

ວຽກງານທີ່ປະຕິບັດໄດ້ສຳເລັດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະສາທາລະນະລັດປະຊາຊົນຈີນໄດ້ເລີ່ມດຳເນີນການສຳຫລວດ ແລະປັກຫລັກຫມາຍຊາຍແດນໃນປີ 1991 ແລະສຳເລັດສົມບູນໃນປີ 1993 ລວມມີຫລັກຫມາຍຊາຍແດນທັງໝົດ 47 ຫລັກຫມາຍ ຊຶ່ງໃນນັ້ນມີຫລັກຫມາຍທີ່ເຮັດດ້ວຍຫີນກຣານິດຈຳນວນ 4 ຫລັກຫມາຍ ຊຶ່ງເປັນຫລັກຫມາຍໃຫຍ່ ແລະຕັ້ງຢູ່ລະຫວ່າງດ່ານກວດກາຂອງສອງຝ່າຍ

ໃນລະຫວ່າງເດືອນມີນາ ເຖິງເດືອນພະຈິກ 2003 ທັງສອງຝ່າຍໄດ້ຮ່ວມກັນສ້ອມແປງຫລັກຫມາຍຊາຍແດນທີ່ເປເພ ທັງໝົດຈຳນວນ 23 ຫລັກຫມາຍ ໄດ້ສຳເລັດຢ່າງດີງາມ, ໃນນັ້ນມີຫລັກໝາຍຊາຍແດນຂະໜາດນ້ອຍ 19 ຫລັກໝາຍຄື: ຫລັກຫມາຍເລກທີ 1, 2, 3, 4, 5, 6, 8, 9, 10, 11, 12, 13, 14, 17, 19, 20, 27, 26, 31 ແລະຫລັກຫມາຍຊາຍແດນຂະໜາດໃຫຍ່ 4 ຫລັກໝາຍຄື: ຫລັກໝາຍເລກທີ 7, 24, 29, 35 ໂດຍໄດ້ປັບປຸງໂຄງປະກອບໃຫ້ເປັນຫີນແກຣນນິດທັງໝົດ, ພ້ອມດ້ວຍເຄື່ອງໝາຍຊາດ ຂອງທັງສອງປະເທດ ກໍ່ເຮັດດ້ວຍວັດຖຸໂລຫະຊະນິດດຽວກັນ

ວຽກງານຄຸ້ມຄອງ ແລະຮ່ວມມືຕາມບໍລິເວນຊາຍແດນ

ເພີ່ມທະວີການປະຕິບັດສັນຍາ ວ່າດ້ວຍລະບຽບການຊາຍແດນລະຫວ່າງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະສາທາລະນະລັດປະຊາຊົນຈີນ ແລະອະນຸສັນຍາເພີ່ມເຕີມ "ສັນຍາວ່າດ້ວຍລະບຽບການຊາຍແດນລະຫວ່າງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະສາທາລະນະລັດປະຊາຊົນຈີນ" ທີ່ໄດ້ລົງນາມໃນວັນທີ 26 ສິງຫາ 1997 ທີ່ປັກກິ່ງ ບົນພື້ນຖານມິດຕະພາບ ແລະການຮ່ວມໄມ້ຮ່ວມມືກັນສ້າງຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍຢູ່ຕາມບໍລິເວນຊາຍແດນ ເພື່ອອຳນວຍຄວາມສະດວກໃຫ້ແກ່ການພັດທະນາເສດຖະກິດຂອງສອງປະເທດຢູ່ຕາມບໍລິເວນຊາຍແດນ

ເຈົ້າໜ້າທີ່ທີ່ກ່ຽວຂ້ອງ ແລະອຳນາດການປົກຄອງທ້ອງຖິ່ນຂອງທັງສອງຝ່າຍ ສືບຕໍ່ເພີ່ມທະວີວຽກງານການຄຸ້ມຄອງຊາຍແດນ ເພື່ອຮັບປະກັນຄວາມສະຫງົບຮຽບຮ້ອຍຕາມບໍລິເວນຊາຍແດນ

ເພີ່ມທະວີວຽກງານສຶກສາອົບຮົມປະຊາຊົນຕາມບໍລິເວນຊາຍແດນ, ແນໃສ່ເຮັດໃຫ້ການເຂົ້າອອກຢູ່ບໍລິເວນຊາຍແດນຂອງປະຊາຊົນຖືກຕ້ອງຕາມລະບຽບຊາຍແດນຢ່າງເຄັ່ງຄັດ ແລະຫລຸດຜ່ອນສະພາບການເຂົ້າອອກເມືອງຜິດກົດຫມາຍ

ການເຂົ້າ-ອອກເມືອງຂອງບຸກຄົນ ແລະຍານພາຫະນະແມ່ນໃຫ້ປະຕິບັດຢ່າງເຂັ້ມງວດຕາມຂໍ້ກຳໜົດທີ່ສອງປະເທດໄດ້ກຳໜົດໄວ້ຄື: ໃຊ້ປັດສະປໍ, ໃບຜ່ານແດນເພື່ອເຂົ້າ-ອອກເມືອງ, ຜູ້ຖືໃບຜ່ານແດນຂອງຝ່າຍຈີນແມ່ນອະນຸຍາດໃຫ້ຢູ່ລາວໄດ້ 10 ວັນ ແລະຕໍ່ໄດ້ອີກ 5 ວັນ (ຕໍ່ໄດ້ເທື່ອດຽວ), ຜູ້ຖືໃບຜ່ານແດນຂອງລາວແມ່ນອະນຸຍາດໃຫ້ຢູ່ຈີນ 15 ວັນ, ທັງສອງຝ່າຍຕ້ອງສະກັດກັ້ນການປອມແປງເອກສານຜ່ານແຜນ, ການລັກລອບຂ້າມຊາຍແດນຂອງພວກຄົນບໍ່ດີ ແລະປະຕິບັດຢ່າງເຂັ້ມງວດຕາມອະນຸສັນຍາເພີ່ມເຕີມ ສັນຍາວ່າດ້ວຍລະບຽບການຊາຍແດນ ລະຫວ່າງສອງປະເທດ ກ່ຽວກັບການປິດ ແລະເປີດດ່ານ, ການເກັບຄ່າທຳນຽມ

ການຜ່ານແດນແມ່ນໃຫ້ປະຕິບັດຢ່າງເຂັ້ມງວດ ຕາມອະນຸສັນຍາເພີ່ມເຕີມຄື: ນັບແຕ່ວັນຈັນເຖິງວັນທິດ ຕອນເຊົ້າເປີດດ່ານຕາມເວລາວຽງຈັນ 07 ໂມງ 30 ນາທີ ແລະເວລາປັກກິ່ງ 08 ໂມງ 30 ນາທີ, ປິດດ່ານຕາມເວລາວຽງຈັນ 16 ໂມງ 30 ນາທີ ແລະເວລາປັກກິ່ງ 17 ໂມງ 30 ນາທີ. ຕອນທ່ຽງບໍ່ມີເວລາພັກຜ່ອນ, ວັນພັກ ຫລືວັນບຸນ ຕ້ອງມີຜູ້ປະຈຳການ, ຖ້າມີກໍລະນີຈຳເປັນເຊັ່ນ: ອຸປະຕິເຫດ, ຄົນເຈັບ ແລະການນຳຊອກຫາຜູ້ຮ້າຍຂ້າມແດນ ແມ່ນສາມາດຜ່ານໄດ້ທຸກເວລາ ໂດຍມີການຍົກເວັ້ນຄ່າທຳນຽມ ແຕ່ຕ້ອງແຈ້ງໃຫ້ເຈົ້າ ໜ້າທີ່ ຂອງອີກຝ່າຍຫນຶ່ງຊາບລ່ວງໜ້າ ເພື່ອເຈົ້າໜ້າທີ່ຝ່າຍນັ້ນຈະໄດ້ອຳນວຍຄວາມສະດວກໃຫ້ໃນກໍລະນີຈຳເປັນ

ວຽກທີ່ຍັງຄົງຄ້າງ

ຈຸດຄົບເສັ້ນຊາຍແດນສາມປະເທດລາວ-ຫວຽດນາມ-ຈີນ

ບັນຫາການເຂົ້າອອກເມືອງຜິດກົດໝາຍ (ເຊິ່ງມີທັງຄົນຈີນເຂົ້າມາລາວ ແລະຄົນລາວເຂົ້າໄປຈີນ ແບບບໍ່ຖືກຕ້ອງຕາມລະບຽບການເຂົ້າອອກຂອງທັງສອງປະເທດ ເປັນຈຳນວນຫລາຍ) ການລ່ວງລໍ້າທຳການຜະລິດ ຢູ່ຕາມບໍລິເວນຊາຍແດນ ເຊັ່ນ: ການຕັດໄມ້ທຳລາຍປ່າເພື່ອປູກຢາງພາລາ ແລະນຳເອົາງົວ, ຄວາຍເຂົ້າມາລ້ຽງຢູ່ເບື້ອງລາວ, ການຜະລິດ ແລະການຄ້າຢາເສບຕິດ

3. ສະຫລຸບຕີລາຄາ

ດ້ານຕັ້ງໜ້າ

ເຫດການກໍ່ສ້າງເມືອງຄົບຊຸດ ຢູ່ບໍລິເວນບໍ່ເຕນ-ບໍ່ຫານ ກໍ່ເປັນນິມິດໝາຍອີກອັນໜຶ່ງໃນການຮ່ວມມືລາວ-ຈີນ ເຮັດໃຫ້ປະຊາຊົນມີໃບໜ້າອັນໃໝ່

ສປ ຈີນ ໄດ້ຊ່ວຍເຫລືອສປປ ລາວ ໃນໄລຍະປັບປຸງເພື່ອສ້າງເງື່ອນໄຂອຳນວຍຄວາມສະດວກໃຫ້ແກ່ການເປັນເຈົ້າພາບຈັດກອງປະຊຸມອາຊຽນຄັ້ງທີ່ 10

ດ້ານຫຍໍ້ທໍ້

ຍັງມີບາງເຂດທີ່ປະຊາຊົນຈີນລັກລອບເຂົ້າມາລ້ຽງສັດ, ປູກຝັງ, ເລີກເຂົ້າມາໃນດິນແດນລາວ

ການຍົກຍ້າຍຂ້າມແດນມາຕັ້ງພູມລຳເນົາ ແລະລັກລອບສ້າງຄອບຄົວລະຫວ່າງປະຊາຊົນລາວ ແລະປະຊາຊົນຈີນຍັງປາກົດມີຢູ່ໃນບາງທ້ອງຖິ່ນ

ການຄ້າຂາຍເຖື່ອນ, ການລັກລອບເຂົ້າເມືອງ ແລະການເຄື່ອນໄຫວກະທຳຜິດກົດໝາຍຕາມບໍລິເວນຊາຍແດນຍັງມີຢູ່ໃນບາງພື້ນທີ່

ສາຍເຫດທີ່ພາໃຫ້ປະຕິບັດໄດ້ດີ

ຍ້ອນມີມູນເຊື້ອສາຍພົວພັນທີ່ດີລະຫວ່າງ ສອງປະເທດລາວ-ຈີນ ກໍ່ຄືປະຊາຊົນສອງຊາດມີຄວາມສາມັກຄີ ແລະເຂົ້າອົກເຂົ້າໃຈກັນດີ

ຍ້ອນພາຍໃຕ້ການຊີ້ນຳນຳພາ ຂອງຂັ້ນເທິງຢ່າງແທດເໝາະ

ເຈົ້າໜ້າທີ່ແຕ່ສູນກາງລົງຮອດທ້ອງຖິ່ນຂອງສອງປະເທດ ມີການປະສານສົມທົບຈັດຕັ້ງປະຕິບັດຕາມສັນຍາ ແລະອະນຸສັນຍາວ່າດ້ວຍລະບຽບການຊາຍແດນລາວ-ຈີນ

ສາຍເຫດທີ່ພາໃຫ້ເກີດມີປະກົດການຫຍໍ້ທໍ້

ສະຕິເປັນເຈົ້າການເຄົາລົບຕໍ່ກົດລະບຽບການຊາຍແດນຂອງອຳນາດການປົກຄອງທ້ອງຖິ່ນຂອງທັ້ງສອງຝ່າຍຍັງບໍ່ທັນສູງ

ລະດັບການຕື່ນຕົວປະຕິບັດລະບຽບການຊາຍແດນຂອງປະຊາຊົນຢູ່ຕາມບໍລິເວນຊາຍແດນຍັງບໍ່ທັນສູງ, ຮ້າຍແຮງກວ່ານັ້ນຍັງມີຈະນວນໜຶ່ງຈົງໃຈລະເມີດການເຂົ້າ-ອອກເມືອງ ບາງຄັ້ງກໍ່ຍັງມີການຊື້ຈ້າງຈອບອອຍເຈົ້າໜ້າທີ່

ຍ້ອນວ່າຫລັກໝາຍຊອຍແດນ ທີ່ມີຢູ່ໃນປະຈຸບັນຕັ້ງຢູ່ຫ່າງໄກກັນຫລາຍ ການກວດກາລາດຕະເວນຂອງເຈົ້າໜ້າທີ່ທ້ອງຖິ່ນຕາມບໍລິເວນຊາຍແດນຍັງບໍ່ທັນທົ່ວເຖິງ

ພວກເຮົາຍັງມີຄວາມຫຍຸ້ງຍາກໃນດ້ານງົບປະມານ ແລະບຸກຄະລາກອນ ສຳຫລັບການເຄື່ອນໄຫວກວດກາລາດຕະເວນ

ວິທີການແກ້ໄຂບັນຫາທີ່ຄົງຄ້າງ

ກ່ຽວກັບການກຳໜົດຈຸດຄົບຊາຍແດນລະຫວ່າງ 3 ປະເທດ ລາວ-ຈີນ-ຫວຽດນາມ ມາຮອດປັດຈຸບັນນີ້, ຄະນະວິຊາການລາວ-ຫວຽດນາມໄດ້ຂື້ນໄປສຳຫລວດ ແລະກຳໜົດຄ່າພິກັດແລ້ວ ຊຶ່ງຜົນການສຳຫລວດດັ່ງກ່າວ ແມ່ນສອດຄ່ອງກັບຂໍ້ມູນທີ່ຝ່າຍລາວ-ຈີນ-ຫວຽດນາມ ໄດ້ສຳຫລວດໄວ້ໃນເມື່ອກ່ອນ. ສະນັ້ນ, ແຜນການຕໍ່ໜ້າກໍ່ຄືພະຍາຍາມພັກດັນໃຫ້ທັງສາມຝ່າຍສາມາດເປີດກອງປະຊຸມຄັ້ງທີ່ 2 ທີ່ຫວຽດນາມຈະເປັນເຈົ້າພາບໃນປີ 2005 ເພື່ອພ້ອມກັນປຶກສາຫາລືເປັນເອກະພາບ ໃນການກຳໜົດຈຸດຄົບເສັ້ນຊາຍແດນສາມປະເທດ ລາວ-ຈີນ-ຫວຽດນາມ

ສຶກສາອົບຮົມປະຊາຊົນຕາມບໍລິເວນຊາຍແດນເພື່ອໃຫ້ເຂົາເຈົ້າເຂົ້າໃຈ ແລະປະຕິບັດຕາມລະບຽບການຊາຍແດນ ລວມທັງຂໍ້ຕົກລົງອື່ນ ໆ ທີ່ກ່ຽວຂ້ອງຢ່າງເຂັ້ມງວດ, ເຈົ້າໜ້າທີ່ທັງສອງຝ່າຍຕ້ອງປະສານສົມທົບກັນຢ່າງແໜ້ນແຟ້ນ ເພື່ອດຳເນີນການແກ້ໄຂບັນຫາ ແລະແລກປ່ຽນຂໍ້ມູນຂ່າວສານນຳກັນ, ເພີ່ມທະວີການກວດກາຕາມບໍລິເວນຊາຍແດນຢ່າງເຄັ່ງຄັດ

4. ຖອດຖອນບົດຮຽນ

ຕ້ອງເຊື່ອມຕໍ່ສັນຍາ, ອະນຸສັນຍາ ແລະລະບຽບການຊາຍແດນ

ຕ້ອງເພີ່ມທະວີການປະສານສົມທົບ ໃນການປະຕິບັດໜ້າທີ່ວຽກງານຊາຍແດນ ໃນການປະຕິບັດໜ້າທີ່ ເພື່ອແກ້ໄຂບັນຫາທີ່ຄົງຄ້າງ

ກຳລັງປ້ອງກັນຊາດ, ປ້ອງກັນຄວາມສະຫງົບຂອງທ້ອງຖິ່ນທັງສອງຝ່າຍກໍ່ໄດ້ມີການຮ່ວມມືກັນ, ໄດ້ມີການແລກປ່ຽນການພົບປະກັນຢ່າງເປັນປົກກະຕິ ເພື່ອສ້າງເງື່ອນໄຂໃຫ້ບໍລິເວນຊາຍແດນມີຄວາມສະຫງົບສຸກ

ຕິດຕາມກວດກາ ແລະດຳເນີນມາດຕະການ ຕໍ່ຜູ້ກະທຳຜິດຢ່າງເໝາະສົມ

5. ແຜນວຽກຍາວນານແລະວຽກງານໃນຕໍ່ໜ້າ

ແຜນວຽກຍາວນານ

ສາທາລະນະລັດປະຊາຊົນຈີນ ກໍ່ຖືວ່າແມ່ນອີກປະເທດໜຶ່ງທີ່ເປັນເພື່ອນຍຸດທະສາດຂອງລາວເຮົາ, ສະນັ້ນການວາງແຜນຍຸດທະສາດໃນການຮ່ວມມືທາງດ້ານວຽກງານຊາຍແດນກໍ່ມີຄວາມສຳຄັນເພື່ອຮັບປະກັນໃຫ້ແກ່ຄວາມໝັ້ນຄົງ ແລະການພັດທະນາເສດຖະກິດຂອງປະເທດຊາດ

ເອົາໃຈໃສ່ເພີ່ມທະວີວຽກງານສຳຫລວດກວດກາ, ລາດຕະເວນໃຫ້ເປັນປົກກະຕິ ເພື່ອປົກປັກຮັກສາຊາຍແດນ ແລະຫລັກໝາຍຊາຍແດນ ລວມທັງວຽກງານການສ້ອມແປງຫລັກໝາຍທີ່ເປ່ເພ

ປົກປັກຮັກສາ ແລະປັບປຸງຄວາມເປັນລະບຽບຮຽບຮ້ອຍຕາມບໍລິເວນຊາຍແດນ, ສົ່ງເສີມການຮ່ວມມືທາງການຄ້າ, ການລົງທືນ ແລະການທ່ອງທ່ຽວຢູ່ຕາມບໍລິເວນຊາຍແດນລາວ-ຈີນໃຫ້ພັດທະນາຂື້ນເປັນກ້າວ ໆ

ເພີ່ມທະວີການກວດກາດ່ານໃຫ້ມີຄວາມເປັນລະບຽບຮຽບຮ້ອຍ ໂດຍສະເພາະການກວດກາຄົນເຂົ້າ-ອອກເມືອງ

ສຶກສາອົບຮົມພະນັກງານ ແລະປະຊາຊົນ ກ່ຽວກັບລະບຽບການເຂົ້າ-ອອກເມືອງໃຫ້ຖືກຕ້ອງ

ເນື່ອງຈາກວ່າຫລັກໝາຍຊາຍແດນທີ່ມີຢູ່ໃນປັດຈຸບັນ ຖ້າທຽບກັບຄວາມຍາວຂອງເສັ້ນຊາຍແດນແລ້ວ ຖືວ່າຍັງມີໜ້ອຍຄິດສະເລຍໄລຍະຫ່າງຂອງແຕ່ລະຫລັກໝາຍ ແມ່ນຢູ່ຫ່າງໄກກັນປະມານ 10,7 ກມ. ສະນັ້ນ, ເພື່ອເຮັດໃຫ້ເສັ້ນຊາຍແດນມີຄວາມຊັດເຈນແລະຈະແຈ້ງຕະຫລອດການ, ໃນຕໍ່ໜ້າພວກເຮົາຈະຕ້ອງເປັນເຈົ້າການໃນການຄົ້ນຄ້ວາ ແລະນຳສະເໜີຕໍ່ຝ່າຍຈີນ ເພື່ອສ້າງໂຄງການປັກຫລັກໝາຍຖີ່ ແລະບູລະນະລະບົບຫລັກໝາຍຊາຍແດນລາວ-ຈີນ ຕະຫລອດເສັ້ນຊາຍແດນ

ວຽກງານຊາຍແດນລາວ-ຈີນ ສະເພາະໜ້າ

1. ການກຳໜົດຈຸດຄົບເສັ້ນຊາຍແດນລະຫວ່າງສາມປະເທດ ລາວ-ຈີນ- ຫວຽດນາມ ໃຫ້ສຳເລັດໃນປີ 2005

2. ການແກ້ໄຂ ແລະສະກັດກັ້ນບັນຫາຫຍໍ້ທໍ້ ຢູ່ຕາມບໍລິເວນຊາຍແດນ, ນອກຈາກນີ້ກໍ່ຍັງມີບັນຫາການເຂົ້າເມືອງຜິດກົດໝາຍ ໂດຍບໍ່ຖືກຕ້ອງຕາມລະບຽບກົດໝາຍ

3.ກະກຽມ ແລະເຂົ້າຮ່ວມກອງປະຊຸມປະຈຳປີ ຂອງຄະນະກຳມາທິການປະຕິບັດງານຮ່ວມສັນຍາລະບຽບການຊາຍແດນລາວ-ຈີນ ຄັ້ງທີ່ 6 ໃນປີ 2005 ທີ່ສປ ຈີນ

4.ນຳເອົາເອກະສານທາງດ້ານກົດໝາຍກ່ຽວກັບການກຳນົດເສັ້ນຊາຍແດນລາວ-ຈີນໄປຂື້ນທະບຽນທີ່ອົງການສະຫະປະຊາຊາດ

6. ຂໍ້ສະເໜີ

- ສຳເໜີໃຫ້ຂັ້ນເທິງແຈ້ງໃຫ້ທ່ອງຖິ່ນກ່ຽວຂ້ອງສົ່ງບົດລາຍງານ ກ່ຽວກັບສະພາບການໃນຂອບເຂດທີ່ຕົນຮັບຜິດຊອບໃຫ້ສູນກາງຢ່າງເປັນປະຈຳ (ສາມເດືອນໜຶ່ງເທື່ອ)
- ໃຫ້ທ້ອງຖິ່ນເປັນເຈົ້າການໃນການປະສານສົມທົບກັບແຂວງທ້ອງຖິ່ນຂອງຈີນທີ່ມີຊາຍແດນຮ່ວມກັນ ເພື່ອຈັດຕັ້ງປະຕິບັດສັນຍາລະບຽບການຊາຍແດນ ກໍ່ຄືບົດບັນທຶກກອງປະຊຸມປະຈຳປີຂອງຄະນະກຳມະການປະຕິບັດງານຮ່ວມສັນຍາລະບຽບການຊາຍແດນລາວ-ຈີນ

ນະຄອນຫລວງວຽງຈັນ, ວັນທີ 8 ກຸມພາ 2005

ຫົວໜ້າຫ້ອງການຄະນະກຳມະການຊາຍແດນແຫ່ງຊາດ ໂຕະຊາຍແດນລາວ-ຈີນ

ຄຳບຸວົງ ສູນວິເລີດ

# ບັນຊີລາຍຊື່ດ່ານຊາຍແດນລາວ-ຈີນ

| | | | |
|---|---|---|---|
| 1 | ແຂວງຜົ້ງສາລີ ດ່ານທ້ອງຖິ່ນ 2 ດ່ານ<br>ດ່ານປະເພນີ 2 ດ່ານ | | |
| | ຊື່ດ່ານ | ເບື້ອງລາວ | ເບື້ອງຈີນ |
| | ດ່ານທ້ອງຖິ່ນ | | |
| | 1. ດ່ານປ່າຄ່າ-ດ່ານມານຈອງ | ມ.ບຸນເໜືອ, ຂ.ຜົ້ງສາລີ | ມ.ຫລ້າ. ຂ.ຢຸນນານ |
| | 2. ດ່ານລານຕຸຍ-ເມືອງຄັງ | ມ.ຍອດອູ່,ຂ.ຜົ້ງສາລີ | ມ.ຈ່າງເຊີນ,<br>ຂ.ຢຸນນານ |
| | ດ່ານປະເພນີ | | |
| | 1. ດ່ານປາຈ່າ-ດ່ານສິນໃຈ | ມ.ຍອດອູ່,ຂ.ຜົ້ງສາລີ | ມ.ຈ່າງເຊີນ,<br>ຂ.ຢຸນນານ |
| | 2. ດ່ານແມງກວາພິງ-ດ່ານຢິວໂລໂຫ | ມ.ຍອດອູ່,ຂ.ຜົ້ງສາລີ | ມ.ຈ່າງເຊີນ,<br>ຂ.ຢຸນນານ |
| 2 | ແຂວງຫລວງນ້ຳທາ ດ່ານສາກົນ 1 ດ່ານ<br>ດ່ານທ້ອງຖິ່ນ 2 ດ່ານ<br>ດ່ານປະເພນີ 1 ດ່ານ | | |
| | ຊື່ດ່ານ | ເບື້ອງລາວ | ເບື້ອງຈີນ |
| | ດ່ານສາກົນ | | |
| | 1. ດ່ານບໍເຕັນ-ບໍຫ່ານ | ມ.ນ້ຳທາ,ຂ.ຫລວງນ້ຳທາ | ມ.ຫລ້າ. ຂ.ຢຸນນານ |
| | ດ່ານທ້ອງຖິ່ນ | | |
| | 1. ດ່ານປາງໄຮ-ດ່ານເມືອງນານ | ມ.ສິງ. ຂ.ຫລວງນ້ຳທາ | ມ.ຫລ້າ. ຂ.ຢຸນນານ |
| | 2. ດ່ານທົວຂອງ-ດ່ານກອນເລີຍ | ມ.ສິງ. ຂ.ຫລວງນ້ຳທາ | ມ.ຫລ້າ. ຂ.ຢຸນນານ |
| | ດ່ານປະເພນີ | | |
| | 1. ດ່ານບ້ານມອມ-ດ່ານເມືອງຢວນ | ມ.ສິງ. ຂ.ຫລວງນ້ຳທາ | ມ.ຫລ້າ. ຂ.ຢຸນນານ |
| 3 | ແຂວງອຸດົມໄຊ ດ່ານທ້ອງຖິ່ນ 1 ດ່ານ | | |
| | ຊື່ດ່ານ | ເບື້ອງລາວ | ເບື້ອງຈີນ |
| | ດ່ານທ້ອງຖິ່ນ | | |
| | 1. ດ່ານໝູຕິ້ນ-ດ່ານແມວຈາຍ | ມ. ນາໝໍ້. ຂ, ອຸດົມໄຊ | ມ.ຫລ້າ. ຂ.ຢຸນນານ |